**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ
ຄະນະປະຈຳ

04
ເລກທີ /ຄປຈ.ກກໝ
ນະຄອນຫຼວງວຽງຈັນ, ວັນທີ 28 ທັນວາ 2022

# ບົດລາຍງານ
## ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025

- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021, ມາດຕາ 29 ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ;
- ອີງຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ສະບັບເລກທີ 03/ສພຊ, ລົງວັນທີ 26 ມີນາ 2021;
- ອີງຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 110/ລບ, ລົງວັນທີ 26 ກັນຍາ 2022 ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ (2023-2025);
- ອີງຕາມໜັງສືຢັ້ງຢືນຂອງສານປະຊາຊົນສູງສຸດ ສະບັບເລກທີ 687/ສປສສ, ລົງວັນທີ 22 ສິງຫາ 2022, ອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 100/ອອປສ, ລົງວັນທີ 16 ສິງຫາ 2022, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 643/ວຂ, ລົງວັນທີ 27 ກັນຍາ 2022, ສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 876/ສສຍລ, ລົງວັນທີ 15 ສິງຫາ 2022 ແລະ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ສະບັບເລກທີ 107/ສນຫລ, ລົງວັນທີ 21 ກັນຍາ 2022;
- ອີງຕາມຜົນຂອງກອງປະຊຸມປຶກສາຫາລືຮ່ວມກັບບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ເພື່ອສົມທົບຮ່າງກົດໝາຍໃນແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ຄັ້ງວັນທີ 25 ພະຈິກ 2022.

### I. ຄວາມສຳຄັນ, ຄວາມຈຳເປັນ ແລະ ສະພາບການດຳເນີນການຄົ້ນຄວ້າປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ໃນໄລຍະແຕ່ປີ 2023-2025 ຂອງສະພາແຫ່ງຊາດ

#### 1. ຄວາມສຳຄັນ:

ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ແມ່ນ ແຜນການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດຂອງສະພາແຫ່ງຊາດ ປະກອບສ່ວນສ້າງລັດແຫ່ງ ສປປ ລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ. ສະນັ້ນ, ການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແມ່ນ ເພື່ອເຮັດໃຫ້ວຽກງານສ້າງ ແລະ ປັບປຸງກົດໝາຍ ແທດເໝາະກັບສະພາບການ ແລະ ຄວາມສາມາດຕົວຈິງຂອງສະພາແຫ່ງຊາດ ຊຸດທີ IX.

2. **ຄວາມຈຳເປັນ:**

ການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ໃນໄລຍະປີ 2023-2025 ແມ່ນ ເນື່ອງຈາກວ່າສະພາແຫ່ງຊາດ ຊຸດທີ IX ໄດ້ມີກອງປະຊຸມສະໄໝວິສາມັນ ເທື່ອທີ 1 ເພື່ອຮັບຮອງເອົາສອງວາລະແຫ່ງຊາດ ຊຶ່ງໄດ້ເລັ່ງທວງໃຫ້ຕ້ອງມີການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ທີ່ຢູ່ນອກແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ. ອີກປະການໜຶ່ງ, ຜ່ານການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ນັ້ນ ມີຮ່າງກົດໝາຍຈຳນວນໜຶ່ງການກຽມຄວາມພ້ອມບໍ່ທັນເລິກເຊິ່ງ, ໜັກແໜ້ນ, ຮັດກຸມ ແລະ ທັນຕາມກຳນົດເວລາຈຶ່ງຈຳເປັນຕ້ອງໄດ້ເລື່ອນໄປໃສ່ກອງປະຊຸມສະໄໝຕໍ່ໄປ.

ດ້ວຍເຫດນັ້ນ, ຄະນະປະຈຳສະພາແຫ່ງຊາດຈຶ່ງໄດ້ມອບໃຫ້ກຳມາທິການກົດໝາຍ ສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ ຄົ້ນຄວ້າ ແລະ ເຫັນປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ໃນໄລຍະປີ 2023-2025.

3. **ສະພາບການຄົ້ນຄວ້າ ແລະ ການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025:**

ປະຕິບັດຕາມຈິດໃຈຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ອອກແຈ້ງການສະບັບເລກທີ 311/ຄລສ.ກໝ, ລົງວັນທີ 1 ສິງຫາ 2022 ເຖິງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອສະເໜີໃຫ້ລັດຖະບານ ແລະ ອົງການທີ່ກ່ຽວຂ້ອງຄົ້ນຄວ້າປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025.

ພາຍຫຼັງທີ່ໄດ້ຮັບໜັງສືສະເໜີດັ່ງກ່າວລັດຖະບານ ໄດ້ຊີ້ນຳບັນດາກະຊວງ ແລະ ອົງການ ຄົ້ນຄວ້າ ແລະ ສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ (2023-2025) ຂອງຕົນ. ບົນພື້ນຖານອີງໃສ່ຜົນຂອງການຄົ້ນຄວ້າ ແລະ ສະເໜີຂອງບັນດາກະຊວງ, ອົງການ. ລັດຖະບານຈຶ່ງຕົກລົງນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ. ຄະນະປະຈຳສະພາແຫ່ງຊາດໄດ້ມອບໃຫ້ກຳມາທິການກົດໝາຍ ປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດຄົ້ນຄວ້າ ແລະ ສັງລວມການສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ໃນໄລຍະແຕ່ປີ 2023-2025 ລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນຕຸລາ ແລະ ເດືອນພະຈິກ 2022, ແລ້ວນຳຜ່ານກອງປະຊຸມຄົບຄະນະຂອງກຳມາທິການກົດໝາຍ ປະຈຳປີ 2022 ແລະ ກອງປະຊຸມປຶກສາຫາລືຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

ຜ່ານການຄົ້ນຄວ້າຫຼາຍຄັ້ງ ຈຶ່ງສາມາດສັງລວມບັນດາຮ່າງກົດໝາຍເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ ໃນໄລຍະແຕ່ປີ 2023-2025 ມີຈ□ານວນທັງໝົດ 65 ສະບັບ, ໃນນີ້ ສ້າງໃໝ່ 22 ສະບັບ, ປັບປຸງ 43 ສະບັບ, ສ່ວນອີກ 9 ສະບັບ ສະເໜີເລື່ອນໄປໃສ່ສະພາແຫ່ງຊາດ ຊຸດທີ X.

**II. ຈຸດປະສົງ ແລະ ລະດັບຄາດໝາຍ**

ການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ໃນໄລຍະແຕ່ປີ 2023-2025 ແມ່ນ ແນໃສ່ໃຫ້ບັນລຸຕາມຈຸດປະສົງລະດັບຄາດໝາຍ ດັ່ງນີ້:

1) ເຮັດໃຫ້ແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ສອດຄ່ອງກັບສະພາບການຕົວຈິງ ແລະ ຄວາມຕ້ອງການຈຳເປັນຮີບດ່ວນໃນໄລຍະ 3 ປີ ຕໍ່ໜ້າ (2023-2025);

2) ຮັບປະກັນຄຸນນະພາບ ແລະ ປະສິດທິພາບໃນການສ້າງ ແລະ ປັບປຸງກົດໝາຍ, ໃນເມື່ອປະກາດໃຊ້ກົດໝາຍແລ້ວ ກໍໃຫ້ສາມາດຈັດຕັ້ງປະຕິບັດໄດ້;

3) ເຮັດໃຫ້ວຽກງານສ້າງ ແລະ ປັບປຸງກົດໝາຍ ໄດ້ຮັບການຈັດຕັ້ງປະຕິບັດຕາມຂັ້ນຕອນ ແລະ ເຕັກນິກການສ້າງ ແລະ ປັບປຸງກົດໝາຍ.

**III. ເນື້ອໃນຂອງການສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ**

ອີງຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ຊຶ່ງມີຈຳນວນ 96 ສະບັບ, ໃນນັ້ນ ສ້າງໃໝ່ 38 ສະບັບ, ປັບປຸງ 58 ສະບັບ. ຜ່ານການຈັດຕັ້ງປະຕິບັດກອງປະຊຸມສະໄໝ ເທື່ອທີ 2 ຫາ ເທື່ອທີ 4 ລວມທັງກອງປະຊຸມສະໄໝວິສາມັນ ເທື່ອທີ 1 ພວກເຮົາສາມາດພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍໄດ້ທັງໝົດ ຈຳນວນ 34 ສະບັບ, ໃນນີ້ ສ້າງໃໝ່ 10 ສະບັບ, ປັບປຸງ 14 ສະບັບ ເທົ່າກັບ 35,41% ຂອງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ, ໃນນີ້ ມີກົດໝາຍສະເໜີມານອກແຜນ ຈຳນວນ 3 ສະບັບ ຄື ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວນສາອາກອນ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍພາສີປະຊາຊົນ.

ສະນັ້ນ, ຈຶ່ງສະເໜີສັບຊ້ອນຮ່າງກົດໝາຍເຂົ້າໃສ່ແຕ່ລະປີ ແລະ ແຕ່ລະກອງປະຊຸມສະພາແຫ່ງຊາດ ດັ່ງນີ້:

**1. ປີ 2023 ມີຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 25 ສະບັບ, ໃນນັ້ນ ສ້າງໃໝ່ 9 ສະບັບ, ປັບປຸງ 16 ສະບັບ ໂດຍແບ່ງໃສ່ແຕ່ລະເທື່ອ ດັ່ງນີ້:**

1) ກອງປະຊຸມສະໄໝສາມັນ ເທື່ອທີ 5 ມີ 13 ສະບັບ, ສ້າງໃໝ່ 6 ສະບັບ, ປັບປຸງ 7 ສະບັບ ຄື:

- ກົດໝາຍສ້າງໃໝ່ 6 ສະບັບ:
  1. ຮ່າງກົດໝາຍວ່າດ້ວຍການປົກຄອງ (ກະຊວງພາຍໃນ);
  2. ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ (ກະຊວງສາທາລະນະສຸກ);
  3. ຮ່າງກົດໝາຍວ່າດ້ວຍອາຄານທີ່ດິນ ແລະ ສິ່ງກໍ່ສ້າງ (ກະຊວງການເງິນ);
  4. ຮ່າງກົດໝາຍວ່າດ້ວຍການຈັດຫາງານ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ);
  5. ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ (ກະຊວງຍຸຕິທຳ);
  6. ຮ່າງກົດໝາຍວ່າດ້ວຍເປົ້າລະຊົນ ອະນຸຊົນທັນວາ (ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ).
- ກົດໝາຍປັບປຸງ 7 ສະບັບ:
  1. ຮ່າງກົດໝາຍວ່າດ້ວຍການປະມົງ (ກະຊວງກະສິກຳ ແລະ ປ່າໄມ້);
  2. ຮ່າງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ (ກະຊວງກະສິກຳ ແລະ ປ່າໄມ້);
  3. ຮ່າງກົດໝາຍວ່າດ້ວຍແຮ່ທາດ (ກະຊວງພະລັງງານ ແລະ ບໍ່ແຮ່);
  4. ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ກະຊວງຍຸຕິທຳ);
  5. ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ທະນາຄານແຫ່ງ ສປປ ລາວ);
  6. ຮ່າງກົດໝາຍວ່າດ້ວຍສານທະຫານ (ກະຊວງປ້ອງກັນປະເທດ);
  7. ຮ່າງກົດໝາຍວ່າດ້ວຍການພິມຈຳໜ່າຍ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ).

2) ກອງປະຊຸມສະໄໝສາມັນ ເທື່ອທີ 6 ມີ 12 ສະບັບ, ສ້າງໃໝ່ 3 ສະບັບ, ປັບປຸງ 9 ສະບັບ ຄື:

- ກົດໝາຍສ້າງໃໝ່ 3 ສະບັບ:
  1. ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ກະຊວງແຜນການ ແລະ ການລົງທຶນ);
  2. ຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ (ກະຊວງສາທາລະນະສຸກ);
  3. ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ (ກະຊວງອຸດສາຫະກຳ ແລະ ການຄ້າ).

➢ ກົດໝາຍປັບປຸງ 9 ສະບັບ:

1. ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ (ກະຊວງການເງິນ);
2. ຮ່າງກົດໝາຍວ່າດ້ວຍການປິ່ນປົວ (ກະຊວງສາທາລະນະສຸກ);
3. ຮ່າງກົດໝາຍວ່າດ້ວຍການບັນຊີ (ກະຊວງການເງິນ);
4. ຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ (ທະນາຄານແຫ່ງ ສປປ ລາວ);
5. ຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ຄະນະປະຈໍາສະພາແຫ່ງຊາດ);
6. ຮ່າງກົດໝາຍວ່າດ້ວຍຜູ້ພິພາກສາ (ສານປະຊາຊົນສູງສຸດ);
7. ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ);
8. ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ);
9. ຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ກະຊວງອຸດສາຫະກໍາ ແລະ ການຄ້າ).

**2. ປີ 2024 ມີຮ່າງກົດໝາຍທີ່ຈະນໍາເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ຈໍານວນ 26 ສະບັບ, ໃນນັ້ນ ສ້າງໃໝ່ 8 ສະບັບ, ປັບປຸງ 18 ສະບັບ ໂດຍແບ່ງໃສ່ແຕ່ລະເທື່ອ ດັ່ງນີ້:**

1) ກອງປະຊຸມສະໄໝສາມັນ ເທື່ອທີ 7 ມີ 13 ສະບັບ, ສ້າງໃໝ່ 5 ສະບັບ, ປັບປຸງ 8 ສະບັບ ຄື:

➢ ກົດໝາຍສ້າງໃໝ່ 5 ສະບັບ:

1. ຮ່າງກົດໝາຍວ່າດ້ວຍສະຫະກອນ (ກະຊວງກະສິກໍາ ແລະ ປ່າໄມ້);
2. ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທໍາມະຊາດທີ່ເປັນຢາ (ກະຊວງສາທາລະນະສຸກ);
3. ຮ່າງກົດໝາຍວ່າດ້ວຍທີ່ຢູ່ອາໄສ (ກະຊວງໂຍທາທິການ ແລະ ຂົນສົ່ງ);
4. ຮ່າງກົດໝາຍວ່າດ້ວຍຄວາມປອດໄພທາງໄຊເບີ (ກະຊວງເຕັກໂນໂລຊີ ແລະ ການສື່ສານ);
5. ຮ່າງກົດໝາຍວ່າດ້ວຍພັດທະນາສີມືແຮງງານ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ).

➢ ກົດໝາຍປັບປຸງ 8 ສະບັບ:

1. ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ);
2. ຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອສໄອວີ/ພະຍາດເອດ (ກະຊວງສາທາລະນະສຸກ);
3. ຮ່າງກົດໝາຍວ່າດ້ວຍການກວດສອບອິດສະລະ (ກະຊວງການເງິນ);
4. ຮ່າງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ທະນາຄານແຫ່ງ ສປປ ລາວ);
5. ຮ່າງກົດໝາຍວ່າດ້ວຍການສຶກສາ (ກະຊວງສຶກສາທິການ ແລະ ກິລາ);
6. ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ອົງການກວດກາແຫ່ງລັດ);
7. ຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ກະຊວງປ້ອງກັນຄວາມສະຫງົບ);
8. ຮ່າງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ (ກະຊວງພາຍໃນ).

2) ກອງປະຊຸມສະໄໝສາມັນ ເທື່ອທີ 8 ມີ 13 ສະບັບ, ສ້າງໃໝ່ 3 ສະບັບ, ປັບປຸງ 10 ສະບັບ ຄື:

➢ ກົດໝາຍສ້າງໃໝ່ 3 ສະບັບ:

1. ຮ່າງກົດໝາຍວ່າດ້ວຍອາກອນສິ່ງແວດລ້ອມ (ກະຊວງການເງິນ);
2. ຮ່າງກົດໝາຍວ່າດ້ວຍສາມັນສຶກສາ (ກະຊວງສຶກສາທິການ ແລະ ກິລາ);

3. ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງຊາດ (ກະຊວງການເງິນ).

➢ ກົດໝາຍປັບປຸງ 10 ສະບັບ:

1. ຮ່າງກົດໝາຍວ່າດ້ວຍການປະກັນສຸຂະພາບ (ກະຊວງສາທາລະນະສຸກ);
2. ຮ່າງກົດໝາຍວ່າດ້ວຍການປະກັນສັງຄົມ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ);
3. ຮ່າງກົດໝາຍວ່າດ້ວຍສະຫະພັນແມ່ຍິງ (ສູນກາງສະຫະພັນແມ່ຍິງລາວ);
4. ຮ່າງກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວ (ສະຫະພັນນັກຮົບເກົ່າແຫ່ງຊາດລາວ);
5. ຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ (ຄະນະປະຈຳສະພາແຫ່ງຊາດ);
6. ຮ່າງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ຄະນະປະຈຳສະພາແຫ່ງຊາດ);
7. ຮ່າງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ຄະນະປະຈຳສະພາແຫ່ງຊາດ);
8. ຮ່າງກົດໝາຍວ່າດ້ວຍຊົນລະປະທານ (ກະຊວງກະສິກຳ ແລະ ປ່າໄມ້);
9. ຮ່າງກົດໝາຍວ່າດ້ວຍກະສິກຳ (ກະຊວງກະສິກຳ ແລະ ປ່າໄມ້);
10. ຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສານປະຊາຊົນສູງສຸດ).

**3. ປີ 2025 ມີຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຈຳນວນ 14 ສະບັບ, ສ້າງໃໝ່ 5 ສະບັບ, ປັບປຸງ 9 ສະບັບ:**

➢ ກົດໝາຍສ້າງໃໝ່ 5 ສະບັບ:

1. ຮ່າງກົດໝາຍວ່າດ້ວຍສັງຄົມສົງເຄາະ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ);
2. ຮ່າງກົດໝາຍວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (ກະຊວງແຜນການ ແລະ ການລົງທຶນ);
3. ຮ່າງກົດໝາຍວ່າດ້ວຍສະຖາປັດຕະຍະກຳ (ກະຊວງໂຍທາທິການ ແລະ ຂົນສົ່ງ);
4. ຮ່າງກົດໝາຍວ່າດ້ວຍຄວາມໝັ້ນຄົງທາງດ້ານການເງິນ (ກະຊວງການເງິນ);
5. ຮ່າງກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ (ອົງການໄອຍະການປະຊາຊົນສູງສຸດ).

➢ ກົດໝາຍປັບປຸງ 9 ສະບັບ:

1. ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (ກະຊວງເຕັກໂນໂລຊີ ແລະ ການສື່ສານ);
2. ຮ່າງກົດໝາຍວ່າດ້ວຍເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ (ກະຊວງເຕັກໂນໂລຊີ ແລະ ການສື່ສານ);
3. ຮ່າງກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ກະຊວງສາທາລະນະສຸກ);
4. ຮ່າງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ກະຊວງປ້ອງກັນປະເທດ);
5. ຮ່າງກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ສູນກາງສະຫະພັນແມ່ຍິງລາວ);
6. ຮ່າງກົດໝາຍວ່າດ້ວຍການໄປສະນີ (ກະຊວງເຕັກໂນໂລຊີ ແລະ ການສື່ສານ);
7. ຮ່າງກົດໝາຍວ່າດ້ວຍປ້າຍ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ);
8. ຮ່າງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ກະຊວງພາຍໃນ);
9. ຮ່າງກົດໝາຍວ່າດ້ວຍໄຟຟ້າ (ກະຊວງພະລັງງານ ແລະ ບໍ່ແຮ່).

## IV. ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ໃຫ້ມີຜົນສໍາເລັດຕາມລະດັບຄາດໝາຍນັ້ນ, ຄະນະປະຈໍາສະພາແຫ່ງຊາດ ສະເໜີມາດຕະການຈັດຕັ້ງປະຕິບັດ ດັ່ງນີ້:

1. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ ຊີ້ນໍາ ກໍາມາທິການກົດໝາຍ ເປັນເຈົ້າການປະສານສົມທົບກັບບັນດາກໍາມາທິການຂອງສະພາແຫ່ງຊາດ, ກະຊວງ, ອົງການ ທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ກະຊວງຍຸຕິທໍາ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຄົ້ນຄວ້າ ແລະ ວາງແຜນຈັດຕັ້ງປະຕິບັດລະອຽດແຕ່ລະກອງປະຊຸມສະພາແຫ່ງຊາດ, ຄົ້ນຄວ້າກໍານົດເນື້ອໃນຕ່າງໆຂອງຮ່າງກົດໝາຍທີ່ຈະສ້າງ ຫຼື ປັບປຸງແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍແຕ່ລະສະບັບມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດນໍາເຂົ້າພິຈາລະນາຮັບຮອງໃນແຕ່ລະກອງປະຊຸມສະພາແຫ່ງຊາດ ໃຫ້ຮັບປະກັນຄຸນນະພາບ ແລະ ທັນຕາມກໍານົດເວລາ;

2. ບັນດາກໍາມາທິການຂອງສະພາແຫ່ງຊາດ ໃຫ້ເອົາໃຈໃສ່ ຕິດຕາມ, ກວດກາ ແລະ ຊຸກຍູ້ ບັນດາກະຊວງ, ອົງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບຕົວຈິງ ແລະ ແນວທາງ, ນະໂຍບາຍຂອງພັກ, ລັດຖະທໍາມະນູນ ແລະ ກົດໝາຍທີ່ປະກາດໃຊ້ແລ້ວ ເພື່ອຮັບປະກັນທາງດ້ານເນື້ອໃນ, ສໍາເລັດທັນຕາມກໍານົດເວລາ ແລະ ສາມາດນໍາເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນແຕ່ລະເທື່ອ ຂອງສະພາແຫ່ງຊາດ ຊຸດທີ IX;

3. ມອບໃຫ້ລັດຖະບານ ຊີ້ນໍາ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ເປັນເຈົ້າການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍສະບັບນີ້ ຢ່າງເຂັ້ມງວດ ໂດຍສະເພາະການແຕ່ງຕັ້ງຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ວາງແຜນການເຄື່ອນໄຫວວຽກງານສ້າງ ແລະ ປັບປຸງກົດໝາຍ, ແຜນງົບປະມານ ແລະ ບົດປະເມີນຜົນການຈັດຕັ້ງປະຕິບັດກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍມີຄວາມຖືກຕ້ອງ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ;

4. ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ ຊີ້ນໍາບັນດາອົງການທີ່ບໍ່ຂຶ້ນກັບກົງຈັກຂອງລັດຖະບານ ລວມທັງການຈັດຕັ້ງຂອງສະພາແຫ່ງຊາດ ໃຫ້ເປັນເຈົ້າການຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍສະບັບນີ້ ຕາມຂົງເຂດຄວາມຮັບຜິດຊອບຂອງຕົນ ໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະອົງການ, ເປັນເຈົ້າການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍຂອງຕົນໃຫ້ຮັບປະກັນຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ທັນຕາມກໍານົດເວລາ;

5. ມອບໃຫ້ກໍາມາທິການກົດໝາຍ ສົມທົບກັບບັນດາກໍາມາທິການຂອງສະພາແຫ່ງຊາດ ແລະ ຄະນະເລຂາທິການສະພາແຫ່ງຊາດ ກະກຽມແຜນການ ແລະ ຂໍ້ແຜນງົບປະມານທີ່ຈໍາເປັນ ສໍາລັບການສ້າງ ແລະ ປັບປຸງກົດໝາຍ, ການຈັດຕັ້ງທາບທາມບັນດາຮ່າງກົດໝາຍ ທີ່ຈະນໍາເຂົ້າພິຈາລະນາຮັບຮອງໃນແຕ່ລະກອງປະຊຸມສະພາແຫ່ງຊາດ ໃຫ້ມີປະສິດທິພາບ, ປະສິດທິຜົນ;

6. ຄະນະປະຈໍາສະພາແຫ່ງຊາດ ມອບໃຫ້ກໍາມາທິການກົດໝາຍເປັນເຈົ້າການປະສານສົມທົບກັບຫ້ອງວ່າການສໍານັກງານປະທານປະເທດ ເພື່ອຮ່ວມກັນຄົ້ນຄວ້າ, ຮຽບຮຽງຮ່າງກົດໝາຍຕ່າງໆທີ່ກອງປະຊຸມສະພາແຫ່ງຊາດໄດ້ຮັບຮອງໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ກ່ອນປະທານສະພາແຫ່ງຊາດຈະລົງລາຍເຊັນສະເໜີຫາປະທານປະເທດ ອອກລັດຖະດໍາລັດປະກາດໃຊ້ໃຫ້ທັນຕາມກໍານົດເວລາທີ່ກົດໝາຍກໍານົດ.

**ຄະນະປະຈໍາສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**